**Customer Service Information – Laotian**

**ຝ່າຍບໍລິການລູກຄ້າຢູ່ທີ່ນີ້ເພື່ອຕອບຄໍາຖາມຂອງທ່ານ. ກະລຸນາກວດເບິ່ງສິ່ງດັ່ງຕໍ່ໄປນີ້ຄືນ ກ່ອນຕິດຕໍ່ ຝ່າຍບໍລິການລູກຄ້າ:**

ໂທລະສັບ: ກົດ 1-866-239-0843 ແລະ ທ່ານຈະໄດ້ຮັບຂໍ້ຄວາມແຈ້ງໃຫ້ເລືອກຕົວເລືອກເມນູ. ເມື່ອທ່ານເຮັດການເລືອກຂອງທ່ານແລ້ວ, ສາຍຂອງທ່ານຈະຖືກພັກໄວ້ ແລະ ທ່ານຈະໄດ້ຍິນສຽງເພງ. ສາຍຂອງທ່ານຈະຖືກພັກໄວ້ໃນຄິວໂດຍອັດຕະໂນມັດ ແລະ ຈະຖືກເຊື່ອມຕໍ່ກັບຕົວແທນຕາມລໍາດັບທີ່ໄດ້ຮັບ. ພວກເຮົາມຸ້ງໝັ້ນທີ່ຈະຊ່ວຍເຫຼືອພົນລະເມືອງຂອງພວກເຮົາທຸກຄົນ. ກະລຸນາຮັບຊາບວ່າ ຜູ້ໃຫ້ບໍລິການໂທລະສັບມືຖືບາງລາຍກໍາລັງປະເຊີນກັບພາວະຂັດຂ້ອງ ຫຼື ຂໍ້ຄວາມ “ວົງຈອນທັງໝົດບໍ່ຫວ່າງໃນຂະນະນີ້”. ສິ່ງນີ້ກ່ຽວຂ້ອງກັບຜູ້ໃຫ້ບໍລິການໂທລະສັບຂອງທ່ານ ແລະ ບໍ່ກ່ຽວຂ້ອງກັບສູນຮັບແຈ້ງຂອງຕົວແທນຂອງພວກເຮົາ. ກະລຸນາລອງໂທໃໝ່ພາຍຫຼັງ ຫຼື ໃຊ້ຜູ້ໃຫ້ບໍລິການໂທລະສັບລາຍອື່ນ.

ອີເມວ: uiclaimshelp@iwd.iowa.gov ຂໍ້ມູນຕໍ່ໄປນີ້ຈະຕ້ອງຖືກລວມເຂົ້າເພື່ອຮັບເອົາຄໍາຕອບທີ່ທັນເວລາ:

- ຊື່ເຕັມຂອງທ່ານ, ລວມທັງຊື່ກາງຂອງທ່ານ
- 4 ຕົວເລກສຸດທ້າຍຂອງໝາຍເລກປະກັນສັງຄົມຂອງທ່ານ
- ວັນເດືອນປີເກີດຂອງທ່ານ
- ທີ່ຢູ່ໄປສະນີແບບເຕັມ
- ກະລຸນາຮັບຮູ້ວ່າ ພວກເຮົາສາມາດເຜີຍແຜ່ຂໍ້ມູນໄປຫາຜູ້ອ້າງສິດ ຫຼື ນາຍຈ້າງເທົ່ານັ້ນ. ຖ້າທ່ານຈະສົ່ງອີເມວຫາຕົວແທນຂອງພວກເຮົາໃນນາມຂອງບາງຄົນ, ພວກເຮົາບໍ່ສາມາດໃຫ້ຂໍ້ມູນໃດໜຶ່ງແກ່ທ່ານໄດ້.
- ຖ້າທ່ານໄດ້ສົ່ງອີເມວໄປແລ້ວ ແລະ ກໍາລັງລໍການຕອບກັບ, ກະລຸນາຢ່າສົ່ງຄໍາຂໍທີ່ຊໍ້າກັນ.